# ເປັນຫຍັງ ຈຶ່ງຕ້ອງການ ການສຶກສາ ເພື່ອປ້ອງກັນໂລກເອດ ໃນ ສປປ.ລາວ:

ອັດຕາການຕິດເຊື້ອໂລກເອດ ຢູ່ ສປປ. ລາວ ແມ່ນຍັງຕ່ຳມີພຽງແຕ່ 0.05 ຫາ 0.06 %. ຊຶ່ງໄດ້ກວດພົບຜູ້ຕິດເຊື້ອໂລກເອດໃນປີ 1990, ແລະ ພົບຜູ້ເປັນໂລກເອດກໍລະນີທຳອິດໃນ ປີ 1992. ຈາກສະຖິຕິການແຜ່ລະບາດຂອງເຊື້ອໂລກເອດ ແຕ່ ປີ 1990 ຫາ ເດືອນ 6 ປີ 2006, ໃນຈຳນວນ 16 ແຂວງ ທີ່ໄດ້ລາຍງານ ມີ 132,401 ຄົນ ທີ່ໄດ້ກວດຫາເຊື້ອໂລກເອດ ແລະ ພົບວ່າຕິດເຊື້ອໂລກເອດ 2,003 ຄົນ; ເປັນໂລກເອດແລ້ວ 1,201 ຄົນ ແລະ ຕາຍຍ້ອນໂລກເອດ 688 ຄົນ.

ເຖິງແມ່ນວ່າອັດຕາການຕິດເຊື້ອໂລກເອດຢູ່ ສປປ.ລາວຍັງຕ່ຳ, ຍ້ອນການເກັບກຳຕົວເລກລາຍງານຍັງບໍ່ທັນທົ່ວເຖິງ, ຂາດການບໍລິການທາງດ້ານສາທາລະນະສຸກເຊັ່ນ: ຂາດໂອກາດໃນການກວດເລືອດ, ການຝຶກອົບຮົມດ້ານບໍລິການທາງດ້ານສາທາລະນາສຸກ, ແລະ ຢ້ານການຈຳແນກ ແລະ ການລັງກຽດຂອງສັງຄົມເມື່ອຮູ້ວ່າມີເລືອດບວກ, ຈຶ່ງເຮັດໃຫ້ກຸ່ມຄົນທີ່ມີຄວາມສ່ຽງ ບໍ່ຢາກໄປກວດເລືອດຊອກຫາເຊື້ອໂລກເອດ. ອັດຕາການຕິດເຊື້ອໂລກເອດມີທ່າອ່ຽງຈະເພີ້ມຂື້ນໃນອານາຄົດຂ້າງໜ້ານີ້, ສາຍເຫດຕົ້ນຕໍແມ່ນມາຈາກຄວາມທຸກຍາກ ທີ່ມັນເກີດຂື້ນ ຢູ່ບາງຂົງເຂດໃນປະເທດ ລະດັບການສຶກສາຍັງຕ່ຳ ແລະ ມີໄພວ່າງງານ ເຊິ່ງເປັນສາເຫດນຳໄປສູ່ ການມີ ພຶດຕິກຳທີສ່ຽງສູງ ແລະ ກ້າວໄປສູ່ການແຜ່ລະບາດຂອງໂລກເອດ. ການຂາດການປົ່ນປົວຕໍ່ພະຍາດຕິດຕໍ່ທາງເພດສຳພັນກໍ່ເປັນສາຍເຫດໜຶ່ງທີ່ເຮັດໃຫ້ເກີດການຕິດເຊື້ອໂລກເອດ.

ອີກດ້ານໜຶ່ງ, ການຂະຫຍາຍຕົວທາງດ້ານສັງຄົມ ແລະ ດ້ານວັດຖຸຢ່າງວ່ອງໄວ ກໍມີສ່ວນໃຫ້ເກີດການຫຼົ້ນກິນຟຸມເຟືອຍ. ຍ້ອນ ການພັດທະນາ ສ້າງໂຄງລ່າງ ແລະ ເຮັດໃຫ້ມີແຮງງານເຄືອນທີ່ ທັງພາຍໃນ ແລະ ຕ່າງປະເທດ, ຄຽງຄູ່ກັບການຂະຫຍາຍຕົວ ທາງທຸລະກິດການຄ້າ ແລະ ອຸສະຫະກຳທອງທ່ຽວ. ແລະ ພະຍາດຕິດຕໍ່ທາງເພດ ສຳພັນ.ຊຶ່ງເປັນ ປັດໃຈຕົ້ນຕໍຂອງການຕິດເຊື້ອໂລກເອດ.

"ຍ້ອນມີຫຼາຍປັດໃຈການສ່ຽງການແຜ່ລະບາດຂອງໂລກເອດຢູ່ ສປປ. ລາວ, ລັດຖະບານລາວຈຶ່ງໄດ້ແນະນຳ ໃຫ້ມີການສຶກສາເພື່ອປ້ອງກັນໂລກເອດ ໃຫ້ແກ່ປະຊາຊົນທົ່ວໄປ ໂດຍສະເພາະຊຸມຊົນກຸ່ມທີ່ມີສ່ຽງຕໍ່ການຕິດເຊື້ອໂລກເອດ ແລະ ຢູ່ທ່າງໄກ່ຊອກລີກ ໂດຍນຳໃຊ້ ຫລາຍວິທີການເຊັ່ນ: ທັກສະຊີວິດ ແລະ ການສຶກສາແບບເພື່ອນສອນເພື່ອນ. ກະຊວງສຶກສາທິການ ໄດ້ເອົາວິຊາທັກສະຊີວິດເຂົ້າໃນຫຼັກສູດການຮຽນ-ການສອນ ທັງໃນ ແລະນອກໂຮງຮຽນ ແລະ ພ້ອມຫຼັກສູດສະຖາບັນສ້າງຄູ ເຊິ່ງປະກອບດ້ວຍວິຊາ ປະຊາກອນສຶກສາ, ແລະ ການສຶກສາ ປ້ອງກັນໂລກເອດ ເຂົ້າໃນ ວິຊາ ການສົ່ງເສີ່ມສຸກຂະພາບ.

ອີງການອຸຍເນດສະໂກ (ບາງກອກ) ພາຍໃຕ້ທືນຊ່ວຍເຫຼືອຂອງ OPEC ໄດ້ໃຫ້ທືນສະໜັບໜູນ ກະຊວງສຶກສາທິການ ໂດຍຜ່ານຫ້ອງການຄະນະກຳມາທິການແຫ່ງຊາດລາວເພື່ອອຸຍແນດສະໂກ ໄດ້ສ້າງໂຄງການຝຶກອົບຮົມ ໃຫ້ແກ່ ຜູ້ອຳນວຍການ ແລະ ຄູອາຈານໂຮງຮຽນມັດທະຍົມໃນແຕ່ລະແຂວງ ກ່ຽວກັບ ການສຶກສາປ້ອງກັນໂລກເອດ. ຈຸດປະສົງແມ່ນເພື່ອເຜີຍແຜ່ຄວາມຮູ້ພື້ນຖານ ກ່ຽວກັບການແຜ່ລະບາດຂອງໂລກເອດ ແລະ ວິທີປ້ອງ

ກັນທີ່ດີແລະຖືກຕ້ອງ, ຄູອາຈານທີ່ໄດ້ຮັບການຝຶກອົບຮົມແມ່ນໄດ້ເຂົ້າໃຈເຖິງຄວາມອັນຕະລາຍຂອງເຊື້ອ ໂລກເອດ ແລະ ສາມາດນຳເອົາຄວາມຮູ້ທີ່ຖືກຕ້ອງກ່ຽວກັບໂລກເອດໄປເຜີຍແຜ່ຕໍ່ໃນໂຮງຮຽນເພື່ອອົບຮົມ ແລະ ສຶກສາໃຫ້ ນັກຮຽນ ກໍຄື ຊຸມຊົນໃນບ້ານໄດ້ເຂົ້າໃຈ ແລະ ຮູ້ເຖິງຄວາມອັນຕາລາຍຂອງພະຍາດດັ່ງກ່າວ

ວິທີການຝຶກອົບຮົມແມ່ນນຳໃຊ້ຫຼາຍຮູບແບບ ແລະ ຫຼາກຫຼາຍວິທີແຕກຕ່າງກັນເພື່ອເຮັດໃຫ້ສຳມະນາກອນໄດ້ຮຽນຮູ້ແລະເຂົ້າໃຈກ່ຽວກັບເຊື້ອໂລກເອດ ແລະ ພະຍາດຕິດຕໍ່ທາງເພດສຳພັນ ເຊັ່ນ: ການຫຼິ້ນເກມ, ການບັນລະຍາຍ, ສາຍວີດີໂອມີພາບປະກອບ ແລະ ກໍລະນີສຶກສາຕ່າງໆ, ສົນທະນາເປັນກຸ່ມ, ໃຊ້ ໂປສະເຕີ ແລະ ແຜ່ນພັບ.

ບົດຮຽນທີ່ຖອດຖອນໄດ້ຈາກການພັດທະນາໂຄງການ ການສຶກສາ ປ້ອງກັນໂລກເອດ ທີ່ມີປະສິດຕິຜົນປະກອບມີວິທີການຕ່າງໆດັ່ງນີ້:

- ຫຼາຍຂະແໜງການປະກອບສ່ວນກັນເຮັດໃຫ້ການປ້ອງກັນການແຜ່ລະບາດມີປະສິດຕິຜົນ.
- ການປະກອບສ່ວນຂອງທຸກໆພາກສ່ວນເພື່ອຮັບປະກັນການສຶກສາປ້ອງກັນພະຍາດໂລກເອດເຂົ້າໃນໂຮງຮຽນ ແລະ ຊຸມຊົນ ຢ່າງມີປະສິດຕິຜົນ.
- ສືບຕໍ່ຝຶກອົບຮົມໃຫ້ຄູອາຈານ ພ້ອມທັງສະໜອງອຸປະກອນໃນການສິດສອນໄປພ້ອມກັນ.
- ເອົາໃຈໃສ່ການສ້າງຄູຝຶກ ( TOT), ຄູສອນ ຢູ່ແຂວງ ແລະ ເມືອງ ເພື່ອຍົກລະດັບ, ແລະ ຕິດຕາມ ຂໍ້ມູນ-ຂ່າວສານໃໝ່ ແລະ ຄວາມຮູ້ ກ່ຽວກັບການສຶກສາເພື່ອປ້ອງກັນພະຍາດຕິດຕໍ່ທາງເພດສຳພັນ ແລະ ໂລກເອດ
- ການສຶກສາເພື່ອປ້ອງກັນໂລກເອດໃນຫຼັກສູດຄວນຈະມີການທົບທວນແລະປັບປຸງຄືນເພື່ອຫຼີກລ້ຽງການຊ້ຳຊ້ອນ ແລະ ມີຂໍ້ມູນຫຼາຍໂພດ ໃນຫຼັກສູດໂຮງຮຽນ.
- ການຕິລະຄາ ແລະປະເມີນຜົນກໍ່ເປັນອັນສຳຄັນທີ່ຈະເຮັດໃຫ້ໂຄງການໄດ້ມີປະສິດຕິດຜົນ.

ຢູ່ ສປປ. ລາວ ຈະເອົາການສຶກສາໃນການ ໂຕ້ຕອບ ຕໍ່ການແຜ່ລະບາດຂອງໂລກເອດ ຈາກບົດຮຽນເພື່ອນບ້ານ ທີ່ມີປະສົບການໃນໄລຍະຜ່ານມາ, ເປັນອັນແນ່ນອນແລ້ວວ່າການສຶກສາເປັນເຄື່ອງມືອັນໜຶ່ງທີດີເລີດໃນການປ້ອງກັນ ນັກຮຽນ, ຄູອາຈານ, ພໍ່ແມ່ນັກຮຽນ ແລະ ຊຸມຊົນ ຈາກການແຜ່ລະບາດຂອງໂລກເອດ. ດັ່ງນັ້ນ, ເພື່ອໃຫ້ ບັນລຸເປົ້າໝາຍ ດັ່ງກ່າວ, ຈິ່ງຮຽກຮ້ອງໃຫ້ມີສັບພະຍາກອນເພີ້ມຂຶ້ນຕື່ມ, ການຝຶກອົບຮົມຄູອາຈານ, ອຸປະກອນການຮຽນການສອນແບບໃໝ່, ແລະສິ່ງທີ່ສຳຄັນກວ່າໝູ່ແມ່ນ ທັດສະນະທີ່ເປີດເຜີຍ ເພື່ອເຮັດໃຫ້ທຸກຄົນໄດ້ຮູ້ວ່າ ໂລກເອດສາມາດຕິດຕໍ່ໄດ້ ແລະ ບໍ່ຕິດຕໍ່ໄດ້ແບບໃດ.

*ຫ້ອງການຄະກຳມາທິການແຫ່ງຊາດລາວເພື່ອອຸຍແນດສະໂກ.*
*ກະຊວງສຶກສາທິການ ສປປລາວ*